ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 13 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 10 JUN 2021

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້ ຂາຍຫຼັກຊັບຢູ່ ສປປ ລາວ
# (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 146/ສຄຄຊ, ລົງວັນທີ 27 ພຶດສະພາ 2021.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວວຽກງານການຄຸ້ມຄອງຜູ້ລົງທຶນຕ່າງປະເທດ ເພື່ອອຳນວຍຄວາມສະດວກ ແລະ ເປັນບ່ອນອີງໃຫ້ແກ່ຜູ້ລົງທຶນຕ່າງປະເທດ ໃນການເຄື່ອນໄຫວຊື້ ຂາຍຫຼັກຊັບຢູ່ ສປປ ລາວ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວມີຄວາມເປັນລະບຽບຮຽບຮ້ອຍ, ຖືກຕ້ອງ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 (ໃໝ່) ການຄຸ້ມຄອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້ ຂາຍຫຼັກຊັບ ຢູ່ ສປປ ລາວ**

ການຄຸ້ມຄອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້ ຂາຍຫຼັກຊັບຢູ່ ສປປ ລາວ ແມ່ນ ການສ້າງເງື່ອນໄຂໃຫ້ຜູ້ລົງທຶນຕ່າງປະເທດໄດ້ເຄື່ອນໄຫວຢ່າງເປັນລະບຽບຮຽບຮ້ອຍ, ມີການຂະຫຍາຍຕົວ ລວມທັງ ການຕິດຕາມ ກວດກາ ການເຄື່ອນໄຫວຂອງຜູ້ລົງທຶນຕ່າງປະເທດ ທີ່ມາເຄື່ອນໄຫວຊື້ ຂາຍຫຼັກຊັບຢູ່ ສປປ ລາວ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ລົງທຶນຕ່າງປະເທດ** ໝາຍເຖິງ ຜູ້ລົງທຶນປະເພດ ບຸກຄົນ ແລະ ສະຖາບັນ ທີ່ມາຈາກຕ່າງປະເທດ ທີ່ບໍ່ມີພູມລຳເນົາຢູ່ ສປປ ລາວ ລວມທັງ ຄົນຕ່າງປະເທດ ທີ່ມາຢູ່ ສປປ ລາວ ບໍ່ເກີນ 1 ປີ ເພື່ອມາຊື້ ຂາຍຫຼັກຊັບ ໃນຕະຫຼາດຫຼັກຊັບຢູ່ ສປປ ລາວ;

2. **ຜູ້ລົງທຶນຕ່າງປະເທດປະເພດບຸກຄົນ** ໝາຍເຖິງ ຜູ້ລົງທຶນທີ່ເປັນບຸກຄົນທົ່ວໄປທີ່ບໍ່ຖືສັນຊາດລາວ;

3. **ຜູ້ລົງທຶນຕ່າງປະເທດປະເພດສະຖາບັນ** ໝາຍເຖິງ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ບໍລິສັດປະກັນໄພ, ກອງທຶນປະກັນສັງຄົມ, ນິຕິບຸກຄົນ ທີ່ບໍ່ຖືກສ້າງຕັ້ງຂຶ້ນຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ການຈັດຕັ້ງສາກົນອື່ນຈາກ ຕ່າງປະເທດ;

4. **ລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ** ໝາຍເຖິງ ລະຫັດທີ່ຕະຫຼາດຫຼັກຊັບ ອອກໃຫ້ແກ່ ຜູ້ລົງທຶນຕ່າງປະເທດ ເພື່ອຄຸ້ມຄອງການເຄື່ອນໄຫວຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດຢູ່ ສປປ ລາວ;

5. **ທະນາຄານຕົວແທນເພື່ອການຊຳລະ** ໝາຍເຖິງ ທະນາຄານທຸລະກິດ ທີ່ເຮັດໜ້າທີ່ຊຳລະໃນວຽກງານຫຼັກຊັບ;

6. **ຄວາມສາມາດທາງດ້ານການປະພຶດສຳລັບບຸກຄົນ** ໝາຍເຖິງ ບຸກຄົນທີ່ມີອາຍຸ 18 ປີ ຂຶ້ນໄປ ແລະ ບໍ່ເປັນບ້າເສັຍຈິດ;

7. **ຄວາມສາມາດທາງດ້ານການປະພຶດສຳລັບສະຖາບັນ** ໝາຍເຖິງ ສະຖາບັນທີ່ຖືກຮັບຮອງຈາກການຈັດຕັ້ງໃຫ້ເປັນນິຕິບຸກຄົນ;

8. **ພາກສ່ວນກ່ຽວຂ້ອງ** ໝາຍເຖິງ ສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຄະນະສາຂາ, ຄະນະພະແນກຂອງ ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນ.

**ມາດຕາ 4 (ໃໝ່) ຫຼັກການ**

ການຄຸ້ມຄອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້ ຂາຍຫຼັກຊັບຢູ່ ສປປ ລາວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ຜູ້ລົງທຶນຕ່າງປະເທດ;
2. ມີຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ;
3. ຮັບປະກັນການ ຄຸ້ມຄອງ, ຕິດຕາມ ແລະ ກວດກາ.

**ມາດຕາ 5 (ປັບປຸງ) ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ຜູ້ລົງທຶນຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງຜູ້ລົງທຶນຕ່າງປະເທດ ທີ່ເຄື່ອນໄຫວຊື້ ຂາຍຫຼັກຊັບຢູ່ ສປປ ລາວ.

## ໝວດທີ 2
## ລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ

**ມາດຕາ 6 (ປັບປຸງ) ການຂໍລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ ທີ່ມີຈຸດປະສົງຊື້ ຂາຍຫຼັກຊັບຢູ່ ສປປ ລາວ ຕ້ອງມີເງື່ອນໄຂຄົບຖ້ວນ ແລະ ປະກອບເອກະສານ ຄົບຖ້ວນ ແລະ ຖືກຕ້ອງ ຕາມການກຳນົດຂອງ ຕະຫຼາດຫຼັກຊັບ.

ຜູ້ລົງທຶນຕ່າງປະເທດ ຕ້ອງມອບສິດຢ່າງເປັນລາຍລັກອັກສອນໃຫ້ແກ່ ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ເພື່ອຍື່ນເອກະສານປະກອບການຂໍລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດຕໍ່ ຕະຫຼາດຫຼັກຊັບ ເພື່ອພິຈາລະນາໃນການອອກລະຫັດການຊື້ ຂາຍຫຼັກຊັບໃຫ້ແກ່ ຜູ້ລົງທຶນຕ່າງປະເທດ.

ສໍາລັບ ເງື່ອນໄຂ ແລະ ເອກະສານປະກອບ ກ່ຽວກັບການຂໍລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ໃຫ້ປະຕິບັດຕາມການກໍານົດຂອງ ຕະຫຼາດຫຼັກຊັບ.

**ມາດຕາ 7 (ປັບປຸງ) ການພິຈາລະນາການຂໍລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ**

ຕະຫຼາດຫຼັກຊັບ ຕ້ອງພິຈາລະນາໃນການອອກລະຫັດການຊື້ ຂາຍຫຼັກຊັບ ໃຫ້ແກ່ຜູ້ລົງທຶນຕ່າງປະເທດ ພາຍໃນເວລາ 7 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີປະຕິເສດ ຕະຫຼາດຫຼັກຊັບ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ພາຍໃນເວລາ 3 ວັນ ລັດຖະການ ນັບແຕ່ວັນທີ່ປະຕິເສດ ເປັນຕົ້ນໄປ.

## ໝວດທີ 3
## ສິດ ແລະ ໜ້າທີ່ຂອງ ຕະຫຼາດຫຼັກຊັບ ແລະ ຜູ້ລົງທຶນຕ່າງປະເທດ

**ມາດຕາ 8 (ໃໝ່) ສິດ ແລະ ໜ້າທີ່ຂອງຕະຫຼາດຫຼັກຊັບ**

ຕະຫຼາດຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ຄູ່ມື ແລະ ລະບຽບການ ທີ່ກ່ຽວຂ້ອງກັບລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ;
2. ພິຈາລະນາ ຫຼື ປະຕິເສດ ການອອກລະຫັດການຊື້ ຂາຍຫຼັກຊັບໃຫ້ແກ່ ຜູ້ລົງທຶນຕ່າງປະເທດ;
3. ປະສານສົມທົບກັບ ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ໃນການພິຈາລະນາ ກ່ຽວກັບການອອກລະຫັດການຊື້ ຂາຍຫຼັກຊັບໃຫ້ແກ່ ຜູ້ລົງທຶນຕ່າງປະເທດ;
4. ໂຈະ ຫຼື ຍົກເລີກ ລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ;
5. ສະເໜີ ທະນາຄານຕົວແທນເພື່ອການຊໍາລະ ເພື່ອໂຈະການເຄື່ອນໄຫວບັນຊີເງິນຝາກຂອງ ຜູ້ລົງທຶນຕ່າງປະເທດ;
6. ແຈ້ງ ກ່ຽວກັບການຍົກເລີກລະຫັດການຊື້ ຂາຍຫຼັກຊັບຂອງ ຜູ້ລົງທຶນຕ່າງປະເທດ ໃຫ້ແກ່ ບໍລິສັດຫຼັກຊັບ ເພື່ອແຈ້ງຕໍ່ໃຫ້ ຜູ້ລົງທຶນຕ່າງປະເທດ ແລະ ທະນາຄານດູແລຊັບສິນ ເພື່ອຊາບ ໃນກໍລະນີທີ່ ຜູ້ລົງທຶນຕ່າງປະເທດ ໃຊ້ບໍລິການທະນາຄານດູແລຊັບສິນ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 9 (ປັບປຸງ) ສິດ ແລະ ໜ້າທີ່ຂອງຜູ້ລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້ ຂາຍຫຼັກຊັບຢູ່ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ມອບສິດໃຫ້ ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ເພື່ອເປັນຜູ້ຕາງໜ້າດໍາເນີນການຂໍລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດນໍາ ຕະຫຼາດຫຼັກຊັບ ແທນຕົນ;
2. ຊື້ ຂາຍຫຼັກຊັບຂອງ ບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ ແລະ ພັນທະບັດລັດຖະບານຢູ່ ສປປ ລາວ;

3. ຮັບຮູ້ ແລະ ເຂົ້າເຖິງ ຂໍ້ມູນຂ່າວສານ ກ່ຽວກັບວຽກງານຫຼັກຊັບ ຫຼື ຂໍ້ມູນທີ່ຕິດພັນກັບການຊື້ ຂາຍຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ລາຍງານ ຫຼື ແຈ້ງ ຕໍ່ ຕະຫຼາດຫຼັກຊັບ ແລະ/ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເມື່ອພົບເຫັນ ຫຼື ຮັບຮູ້ ການຊື້ ຂາຍຫຼັກຊັບທີ່ບໍ່ຍຸຕິທຳ ຫຼື ການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ;

5. ປະຕິບັດພັນທະໃນການເສຍ ຄ່າບໍລິການ ແລະ ອາກອນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ໄດ້ຮັບຜົນປະໂຫຍດຕ່າງໆ ທີ່ຕິດພັນກັບການລົງທຶນໃນຫຼັກຊັບຂອງຕົນ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ອັດຕາສ່ວນການຖືຄອງຫຼັກຊັບ, ການເປີດບັນຊີ, ການໂອນເງິນ ແລະ ການຊື້ ຂາຍຫຼັກຊັບ

### ມາດຕາ 10 (ປັບປຸງ) ອັດຕາສ່ວນການຖືຄອງຫຼັກຊັບ

ຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນຂອງ ບໍລິສັດອອກຈຳໜ່າຍຮຸ້ນ ຫຼື ບໍລິສັດຈົດທະບຽນ ຕາມບູລິມະສິດ ດັ່ງນີ້:

1. ຕາມການກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການຂອງ ຂະແໜງການອື່ນທີ່ກ່ຽວຂ້ອງ;

2. ຕາມການກຳນົດຂອງມະຕິກອງປະຊຸມຜູ້ຖືຮຸ້ນຂອງ ບໍລິສັດອອກຈຳໜ່າຍຮຸ້ນ ຫຼື ບໍລິສັດຈົດທະບຽນ;

3. ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນແຕ່ລະກໍລະນີ.

ສຳລັບການຖືຄອງຮຸ້ນກູ້ ແລະ ໜ່ວຍລົງທຶນ ແມ່ນປະຕິບັດຕາມ ມະຕິກອງປະຊຸມຜູ້ຖືຮຸ້ນຂອງ ບໍລິສັດອອກຈຳໜ່າຍຮຸ້ນ ຫຼື ບໍລິສັດຈົດທະບຽນ, ກອງປະຊຸມຜູ້ຖືໜ່ວຍລົງທຶນຂອງກອງທຶນຮ່ວມ ຫຼື ນະໂຍບາຍການລົງທຶນຂອງກອງທຶນເພື່ອການລົງທຶນ.

### ມາດຕາ 11 (ປັບປຸງ) ການເປີດບັນຊີເງິນຝາກ ແລະ ບັນຊີຫຼັກຊັບ

ພາຍຫຼັງໄດ້ຮັບລະຫັດການຊື້ ຂາຍຫຼັກຊັບແລ້ວ ຜູ້ລົງທຶນຕ່າງປະເທດ ຕ້ອງເປີດ 2 ບັນຊີ ດັ່ງນີ້:

1. ເປີດບັນຊີເງິນຝາກ ກະແສລາຍວັນ ຫຼື ປະຢັດ ເປັນສະກຸນເງິນກີບ ສຳລັບຊື້ ຂາຍຫຼັກຊັບ ນຳທະນາຄານຕົວແທນເພື່ອການຊຳລະ ດ້ວຍຕົນເອງ ຫຼື ຜ່ານທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ທີ່ຕົນໄດ້ມອບສິດຢ່າງເປັນລາຍລັກອັກສອນ ແລະ ເງິນທີ່ນຳເຂົ້າບັນຊີດັ່ງກ່າວ ຕ້ອງເປັນເງິນໂອນຜ່ານລະບົບທະນາຄານເທົ່ານັ້ນ ສຳລັບລູກຄ້າຕ່າງປະເທດທີ່ບໍ່ມີພູມລຳເນົາຢູ່ ສປປ ລາວ;

2. ເປີດບັນຊີຫຼັກຊັບ ກັບ ບໍລິສັດຫຼັກຊັບ ທີ່ຕົນມີຈຸດປະສົງໃຊ້ບໍລິການ ດ້ວຍຕົນເອງ ຫຼື ຜ່ານທະນາຄານດູແລຊັບສິນ ທີ່ຕົນໄດ້ມອບສິດຢ່າງເປັນລາຍລັກອັກສອນ.

### ມາດຕາ 12 ການນຳເງິນເຂົ້າ-ອອກ ສປປ ລາວ

ການນຳເງິນເຂົ້າ-ອອກ ສປປ ລາວ ຂອງຜູ້ລົງທຶນຕ່າງປະເທດ ທີ່ຕິດພັນກັບການຊື້ ຂາຍຫຼັກຊັບຢູ່ ສປປ ລາວ ແມ່ນໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 13 ການຊື້ ຂາຍຫຼັກຊັບ**

ການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ຕ້ອງສົ່ງຄຳສັ່ງຊື້ ຂາຍ ຜ່ານຊ່ອງທາງຂອງ ບໍລິສັດຫຼັກຊັບ ທີ່ຕົນໄດ້ເປີດບັນຊີຫຼັກຊັບນຳ ຕາມລະບຽບການທີ່ກ່ຽວຂ້ອງກຳນົດ.

## ໝວດທີ 5
## ຂໍ້ຫ້າມ, ການໂຈະ ແລະ ການຍົກເລີກ
## ລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ

**ມາດຕາ 14 ຂໍ້ຫ້າມສຳລັບຕະຫຼາດຫຼັກຊັບ**

ຕະຫຼາດຫຼັກຊັບ ມີຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 180. ນອກຈາກນັ້ນ ຍັງມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ອອກລະຫັດ ເກີນ 1 ລະຫັດ ໃຫ້ຜູ້ລົງທຶນຕ່າງປະເທດ 1 ລາຍ;
2. ອອກລະຫັດ ໃຫ້ແກ່ຜູ້ລົງທຶນຕ່າງປະເທດ ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;
3. ອອກລະຫັດ ໃຫ້ແກ່ຜູ້ລົງທຶນຕ່າງປະເທດທີ່ຖືກຫ້າມໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຈາກ ອົງການຄຸ້ມຄອງວຽກງານຫຼັກຊັບທັງ ພາຍໃນ ແລະ ຕ່າງປະເທດ;
4. ອອກລະຫັດ ໃຫ້ແກ່ຜູ້ລົງທຶນຕ່າງປະເທດ ທີ່ຖືກກຳນົດໄວ້ໃນຍັດຕິ S/RES/1267 ປີ 1999 S/RES/1373 ປີ 2001 ແລະ ຍັດຕິອື່ນທີ່ກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 15 (ໃໝ່) ຂໍ້ຫ້າມສຳລັບ ຜູ້ລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ ມີຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 171. ນອກຈາກນັ້ນ ຍັງມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ນຳເງິນເຂົ້າມາ ສປປ ລາວ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ກະທຳ ຫຼື ຮ່ວມມືກັບ ບຸກຄົນ ຫຼື ນິຕິບຸກຄົນອື່ນ ເພື່ອດຳເນີນການຊື້ ຂາຍຫຼັກຊັບ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ຂໍລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດເກີນ 1 ລະຫັດ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 16 (ປັບປຸງ) ການໂຈະການເຄື່ອນໄຫວລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ**

ລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ຈະຖືກໂຈະໂດຍຕະຫຼາດຫຼັກຊັບໃນກໍລະນີ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ພົບເຫັນ ການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ພາຍຫຼັງໄດ້ອອກລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ;
2. ຊື້ ຂາຍຫຼັກຊັບຜິດປົກກະຕິ ທີ່ສົ່ງ ຫຼື ອາດສົ່ງຜົນເສຍຫາຍຕໍ່ ຜູ້ລົງທຶນ, ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ ຫຼື ຕະຫຼາດຫຼັກຊັບ;
3. ຕາມການສະເໜີຂອງອົງການທີ່ມີສິດອຳນາດກ່ຽວຂ້ອງ;

4. ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ ທີ່ມີລັກສະນະເບົາ.

ຕະຫຼາດຫຼັກຊັບ ຕ້ອງແຈ້ງ ກ່ຽວກັບການໂຈະການເຄື່ອນໄຫວຂອງລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍເຫດຜົນ ແລະ ກຳນົດເວລາການແກ້ໄຂຕໍ່ ຜູ້ລົງທຶນຕ່າງປະເທດ ເພື່ອຊາບ ກ່ຽວກັບສາເຫດຖືກໂຈະ ພ້ອມທັງກຳນົດເວລາໃຫ້ແກ່ພວກກ່ຽວເພື່ອແກ້ໄຂ ພ້ອມທັງຕ້ອງແຈ້ງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນ ເພື່ອຊາບ.

**ມາດຕາ 17 (ປັບປຸງ) ການໂຈະການເຄື່ອນໄຫວບັນຊີເງິນຝາກສຳລັບຊື້ ຂາຍຫຼັກຊັບ**

ບັນຊີເງິນຝາກສຳລັບຊື້ຂາຍຫຼັກຊັບຂອງ ຜູ້ລົງທຶນຕ່າງປະເທດ ຈະຖືກໂຈະການເຄື່ອນໄຫວໃນກໍລະນີລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ຖືກໂຈະການເຄື່ອນໄຫວ.

**ມາດຕາ 18 (ປັບປຸງ) ການຍົກເລີກລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ**

ລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ຈະຖືກຍົກເລີກໂດຍ ຕະຫຼາດຫຼັກຊັບ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ຜູ້ລົງທຶນຕ່າງປະເທດ ຂໍຍົກເລີກລະຫັດການຊື້ ຂາຍຫຼັກຊັບຂອງຕົນ ດ້ວຍຄວາມສະໝັກໃຈ;
2. ລະເມີດຂໍ້ຕົກລົງສະບັບນີ້, ລະບຽບການຂອງຕະຫຼາດຫຼັກຊັບ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ ທີ່ມີລັກສະນະຮ້າຍແຮງ;
3. ຜູ້ລົງທຶນຕ່າງປະເທດ ບໍ່ແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ວັກທີສອງ ຂອງຂໍ້ຕົກລົງສະບັບນີ້.

ຕະຫຼາດຫຼັກຊັບ ຕ້ອງແຈ້ງ ກ່ຽວກັບການຍົກເລີກລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ໃຫ້ ຜູ້ລົງທຶນຕ່າງປະເທດດັ່ງກ່າວ ຊາບ ພ້ອມທັງແຈ້ງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນ ເພື່ອຊາບ ໃນກໍລະນີທີ່ ຜູ້ລົງທຶນຕ່າງປະເທດໃຊ້ບໍລິການ ທະນາຄານດູແລຊັບສິນ.

ການຍົກເລີກລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ຕ້ອງປະຕິບັດພາຍຫຼັງສຳເລັດການໄລ່ລຽງທຸລະກຳຫຼັກຊັບ ແລະ ຕ້ອງປະຕິບັດຕາມລະບຽບການສະເພາະຂອງ ຕະຫຼາດຫຼັກຊັບ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 19 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ຜູ້ລົງທຶນຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງຜູ້ລົງທຶນຕ່າງປະເທດ ທີ່ເຄື່ອນໄຫວຊື້ ຂາຍຫຼັກຊັບຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 20 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ຜູ້ລົງທຶນຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງຜູ້ລົງທຶນຕ່າງປະເທດ ທີ່ເຄື່ອນໄຫວຊື້ ຂາຍຫຼັກຊັບຢູ່ ສປປ ລາວ ທີ່

ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົບ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ຜູ້ລົງທຶນຕ່າງປະເທດຂໍລະຫັດການຊື້ຂາຍຫຼັກຊັບ ສຳລັບຜູ້ລົງທຶນຕ່າງປະເທດເກີນ ໜຶ່ງລະຫັດ, ບໍ່ລາຍງານຕໍ່ ຕະຫຼາດຫຼັກຊັບ ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເມື່ອພົບເຫັນ ຫຼື ຮັບຮູ້ ການຊື້ ຂາຍຫຼັກຊັບທີ່ບໍ່ຍຸຕິທຳ ຫຼື ການລະເມີດລະບຽບກົດໝາຍໃນຂົງເຂດວຽກງານຫຼັກຊັບ, ລາຍງານລ່າຊ້າ, ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກອື່ນທີ່ສ່ວນກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືເສຍຫາຍ ແລະ ຄູ່ກໍລະນີສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;

3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ແລະ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້;

4. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝຕໍ່ກັບ ຕະຫຼາດຫຼັກຊັບ ທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ເປັນຄັ້ງທີ 2 ຈະຖືກປັບໃໝ ຈຳນວນ 2 ເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;

2. ບໍ່ລາຍງານ ຫຼື ບໍ່ສະໜອງຂໍ້ມູນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ 1.000.000 ກີບ ຕໍ່ວັນ ນັບແຕ່ວັນລະເມີດເປັນຕົ້ນໄປ;

3. ອອກລະຫັດ ເກີນ 1 ລະຫັດ ໃຫ້ຜູ້ລົງທຶນຕ່າງປະເທດໜຶ່ງລາຍ, ອອກໃຫ້ແກ່ຜູ້ລົງທຶນຕ່າງປະເທດທີ່ຖືກຫ້າມໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຈາກອົງການຄຸ້ມຄອງວຽກງານຫຼັກຊັບທັງ ພາຍໃນ ແລະ ຕ່າງປະເທດ, ອອກໃຫ້ແກ່ຜູ້ລົງທຶນຕ່າງປະເທດ ທີ່ຖືກກຳນົດໄວ້ໃນຍັດຕິ S/RES/1267 ປີ 1999 S/RES/1373 ປີ 2001 ແລະ ຍັດຕິອື່ນທີ່ກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 3.000.000 ກີບ.

ມາດຕະການປັບໃໝຕໍ່ກັບ ຜູ້ລົງທຶນຕ່າງປະເທດ ທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ເປັນຄັ້ງທີ 2 ຈະຖືກປັບໃໝ ຈຳນວນ 2 ເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;

2. ບໍ່ລາຍງານ ຫຼື ບໍ່ສະໜອງຂໍ້ມູນ ໃຫ້ແກ່ ຕະຫຼາດຫຼັກຊັບ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ 1.000.000 ກີບ ຕໍ່ວັນ ນັບແຕ່ວັນລະເມີດເປັນຕົ້ນໄປ;

3. ໂອນເງິນເຂົ້າມາ ສປປ ລາວ ໂດຍບໍ່ຜ່ານລະບົບທະນາຄານ, ສັ່ງຄຳສັ່ງຊື້ ຂາຍຫຼັກຊັບ ໂດຍບໍ່ຜ່ານບໍລິສັດຫຼັກຊັບ ທີ່ຕົນເປີດບັນຊີຫຼັກຊັບນຳ, ຮ່ວມມືກັບ ບຸກຄົນ ຫຼື ນິຕິບຸກຄົນອື່ນ ເພື່ອດຳເນີນການຊື້ ຂາຍຫຼັກຊັບ ທີ່ບໍ່ຖືກຕ້ອງຕາມ ລະບຽບການ ຈະຖືກປັບໃໝ 2 ເທົ່າ ຂອງຄວາມເສຍຫາຍທີ່ເກີດຂຶ້ນຕົວຈິງ.

ມາດຕະການເພີ່ມເຕີມ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນ ໃຫ້ຖືກຕ້ອງຕາມການທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຈະການອອກ ແລະ ການເຄື່ອນໄຫວຂອງລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ;

3. ຍົກເລີກລະຫັດການຊື້ ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ;

4. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊ ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 21 (ປັບປຸງ) ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ຜູ້ລົງທຶນຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງຜູ້ລົງທຶນຕ່າງປະເທດ ທີ່ເຄື່ອນໄຫວຊື້ ຂາຍຫຼັກຊັບຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດ ສິດ ແລະ ໜ້າທີ່ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 22 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນລະບຽບວ່າດ້ວຍການຄຸ້ມຄອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້ ຂາຍຫຼັກຊັບຢູ່ ສປປ ລາວ ສະບັບເລກທີ 005/ຄຄຊ, ລົງວັນທີ 8 ທັນວາ 2015.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ປະທານ

ສອນໄຊ ສິດພະໄຊ